**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

**ບໍລິສັດ ດັກລັກ ຣັບເບີ ຈຳກັດ**

**DAKLAORUCO**

ເລກທີ: 318/ຈກ.ບສ

*ປາກເຊ, ວັນທີ 22 ເດືອນ 06 ປີ 2024*

# ແຈ້ງການ

## ເລື່ອງ: ຂໍ້ກຳນົດດ້ານຄວາມປອດໄພແຮງງານ ແລະ ການສະກັດກັ້ນປ້ອງກັນອັກຄີໄພ

ອີງຕາມກົດໝາຍແຮງງານ(ສະບັບປັບປຸງ) ປີ 2013;

ອີງຕາມກົດລະບຽບພາຍໃນຂອງບໍລິສັດທີ່ໄດ້ຜ່ານການອະນຸມັດ;

ແນໃສ່ເພື່ອຮັບປະກັນໃຫ້ຜູ້ອອກແຮງງານທຸກຄົນມີຄວາມປອດໄພທາງດ້ານຮ່າງກາຍ, ປ້ອງກັນບໍ່ໃຫ້ເກີດອຸປະຕິເຫດແຮງງານ, ບໍ່ເປັນພະຍາດອາຊີບ, ຮັກສາສະຖຽນດ້ານສຸຂະພາບ ແລະ ຄວາມສາມາດແຮງງານ.

ດັ່ງນັ້ນ, ອຳນວຍການບໍລິສັດດັກລັກຣັບເບີຈຳກັດ ຈຶ່ງໄດ້ປະກາດແຈ້ງການກ່ຽວກັບບາງເນື້ອໃນດັ່ງລຸ່ມນີ້:

**1. ຂໍ້ກຳນົດດ້ານຄວາມປອດໄພແຮງງານ ແລະ ປ້ອງກັນອັກຄີໄພ.:**

- ຈັດລະບຽບສະຖານທີ່ເຮັດວຽກ ໃຫ້ກວ້າງຂວາງ, ສະອາດ, ປອດໂປ່ງ ມີອາກາດຖ່າຍເທສະດວກ ແລະ ມີຫຼັກການວິທະຍາສາດ.
- ຜູ້ອອກແຮງງານຈະໄດ້ຮັບເຄື່ອງແບບປ້ອງກັນແຮງງານຕາມຄວາມຈຳເປັນ ແລະ ແທດເໝາະກັບ ແຕ່ລະຕຳແໜ່ງໜ້າທີ່ວຽກງານ.
- ຈັດຕັ້ງເຝິກອົບຮົມດ້ານຄວາມສະອາດປອດໄພແຮງງານ, ດ້ານການປ້ອງກັນອັກຄີໄພໃນແຕ່ລະປີ. ເຜີຍແຜ່ບັນດາກົດລະບຽບກ່ຽວກັບຄວາມສະອາດປອດໄພແຮງງານ ແລະ ການປ້ອງກັນອັກຄີໄພໃຫ້ກັບຜູ້ອອກແຮງງານ.
- ຫ້ອຍ/ແຂວນ, ຕິດປ້າຍບອກເຕືອນ ກ່ຽວກັບຫລັກການປ້ອງກັນອັກຄີໄພ ການລະເບີດ, ຄູ່ມືແນະນຳດ້ານຄວາມສະອາດ ແລະຄວາມປອດໄພແຮງງານ ໃຫ້ຖືກກັບສະຖານທີ່, ແນມເຫັນໄດ້ງ່າຍ, ອ່ານງ່າຍ, ເຂົ້າໃຈງ່າຍ.
- ມີຄູ່ມືແນະນຳ ວິທີການນຳໃຊ້ເຄື່ອງຈັກໃຫ້ຖືກຕ້ອງ.
- ຈັດຕັ້ງກວດສຸຂະພາບປະຈຳປີໃຫ້ແກ່ຜູ້ອອກແຮງງານ.
- ຕິດຕາມກວດກາການປະຕິບັດວຽກງານດ້ານຄວາມສະອາດປອດໄພແຮງງານຢູ່ບ່ອນເຮັດວຽກເປັນປະຈຳ.
- ລົງມືປະຕິບັດຕາມບັນດາຄຳແນະນຳ, ກ່າວເຕືອນຂອງຄະນະກວດກາດ້ານຄວາມປອດໄພຄວາມສະອາດແຮງງານ ແລະ ອຸປະຕິເຫດແຮງງານ.

**2. ປະກາດເບີໂທລະສັບຂອງບໍລິສັດ, ນິຄົມ,ໂຮງງານ:**

***ເບີໂທລະສັບຂອງຄະນະຊີ້ນຳຂັ້ນບໍລິສັດ:**

| | | |
|---|---|---|
| 1. ທ່ານ ຫງວ໋ຽນດຶກທັ້ນ | - ອຳນວຍການບໍລິສັດ | 020 96011211 |
| 2. ທ່ານ ຕື່ວັນຫວ໋ຽນ | - ຮອງອຳນວຍການບໍລິສັດ | 020 99827799 |
| 3. ທ່ານ ບຸ່ຍທຽນທັນ | - ຮອງອຳນວຍການບໍລິສັດ | 020 96282686 |
| 4. ທ່ານ ດັ້ງດຶ່ງຟຸ໋ງ | - ຮອງອຳນວຍການບໍລິສັດ | 020 99522333 |
| 5. ທ່ານນາງ ຫງວຽນທີ້ຫາຍ | - ຫົວໜ້າຫ້ອງການບໍລິສັດ | 020 98774274 |
| 6. ທ່ານນາງ ດັ້ງທີ້ແທງຫຽວ | - ຮອງຫົວໜ້າຫ້ອງການບໍລິສັດ | 020 98559787 |

7. ທ່ານນາງ ຈັນສຸກໄຊຍະສິດ - ຮອງຫົວໜ້າຫ້ອງການບໍລິສັດ 020 99879977

*** ເບີໂທລະສັບຂອງຄະນະຊີ້ນຳຂັ້ນນິຄົມ:**

1. ທ່ານ ຟ້າມດົ່ງຕື້ - ຮອງອຳນວຍການນິຄົມ 1 020 95675767
2. ທ່ານ ດົງຈ້ອງຝຸກ -ອຳນວຍການນິຄົມ 2 020 98877979
3. ທ່ານ ຫງວຽນວັນຄາ -ອຳນວຍການນິຄົມ 3 020 97939595
4. ທ່ານ ຫງວຽນດັ່ງຕ້ວນ -ອຳນວຍການນິຄົມ 4 020 97685999
5. ທ່ານ ບຸ່ຍວັນຫາຍ -ອຳນວຍການໂຮງງານ 020 99236789

**4**. ມອບໜ້າທີ່ດັ່ງກ່າວໃຫ້ຫ້ອງການ ບໍລິສັດປະສານສົມທົບກັບອຳນວຍການແຕ່ລະນິຄົມເຜີຍແຜ່ ບັນດານະໂຍບາຍຕ່າງໆຂອງບໍລິສັດໃຫ້ໄປຮອດໄປເຖິງຜູ້ອອກແຮງງານທຸກຄົນ. ພ້ອມດຽວກັນນັ້ນກໍ່ຕ້ອງໝັ່ນລົງຕິດຕາມກວດກາສະພາບການປະຕິບັດຕາມເນື້ອໃນດັ່ງກ່າວຢູ່ແຕ່ລະນິຄົມ ແລະ ລາຍງານໃຫ້ທ່ານອຳນວຍການບໍລິສັດຮັບຊາບເພື່ອແກ້ໄຂບັນດາບັນຫາທີ່ຍັງຂ້ອງຄາ.

**5**. ແຈ້ງການສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ຈົນກວ່າຈະມີແຈ້ງການອື່ນປ່ຽນແທນ.

ດັ່ງທີ່ໄດ້ກ່າວມາຂ້າງເທິງນີ້, ແມ່ນແຈ້ງການຂອງທ່ານອຳນວຍການບໍລິສັດ. ໃຫ້ບັນດາຫ້ອງການຕ່າງໆທີ່ກ່ຽວຂ້ອງ ແລະ ບັນດາໜ່ວຍງານທັງໝົດ ນຳໄປຈັດຕັ້ງປະຕິບັດ.

**ອຳນວຍການບໍລິສັດ**

*ບ່ອນນຳສົ່ງ:*

- ຄະນະອຳນວຍການ;
- ຫ້ອງການຕ່າງໆຂອງບໍລິສັດ;
- ບັນດາກຸ່ມກອງໜ່ວຍງານຕ່າງໆ;
- ສຳເນົາ ຂາອອກ-ຂາເຂົ້າ

ກະຊວງ ກະສິກຳ ແລະ ປ່າໄມ້ ບໍລິສັດ ດັກລັກ ຣັບເບີ ຈຳກັດ DAKLAK RUBBER CO.,LTD ແຂວງ ຈຳປາສັກ

*Nguyễn Đức Hạnh*